ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ພິທີປະກາດການປັບປຸງໂຄງສ້າງ ແລະ ການຈັດຕັ້ງ ຂອງສໍານັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ)




ໃນຕອນເຊົ້າຂອງວັນທີ 29 ຕຸລາ 2021 ສໍານັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ), ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງພິທີປະກາດປັບປຸງໂຄງສ້າງ ແລະ ການຈັດຕັ້ງ ຂອງ ສຕຟງ ພາຍໃຕ້ການ ເປັນປະທານຂອງ ທ່ານ ນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ພ້ອມດ້ວຍຜູ້ຕາງໜ້າຈາກບັນດາ ກົມພາຍໃນ ທຫລ ປະກອບມີ ກົມຈັດຕັ້ງແລະພະນັກງານ, ກົມກວດກາພາຍໃນ, ຫ້ອງການ ແລະ ພະນັກງານ ສຕຟງ ຈໍານວນໜຶ່ງເຂົ້າຮ່ວມຢ່າງພ້ອມພຽງ.

ການປັບປຸງໂຄງສ້າງ ແລະ ການຈັດຕັ້ງ ຂອງ ສຕຟງ ປະກອບມີ 04 ພະແນກຄື: 1) ພະແນກບໍລິຫານ ແລະ ການເງິນ (Administration Division), 2) ພະແນກວິເຄາະຂ່າວກອງ (Analysis Division), 3) ພະແນກຕິດຕາມ ແລະ ກວດກາ (Monitoring and Inspection Division) ແລະ 4) ພະແນກນິຕິກໍາ ແລະ ຮ່ວມມືສາກົນ (Legal and International Cooperation Division), ພ້ອມທັງໄດ້ແຕ່ງຕັ້ງຮອງຫົວໜ້າ ສຕຟງ 01 ທ່ານ ແລະ ພະນັກງານຂັ້ນພະແນກຈໍານວນໜຶ່ງ ເຂົ້າໃນໂຄງສ້າງໃໝ່ຂອງສໍານັກງານຂໍ້ມູນຕ້ານການຟອກເງິນ ເພື່ອຮັບປະກັນໃຫ້ແກ່ການຂັບເຄື່ອນວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສອດຄ່ອງກັບຫຼັກການພາຍໃນ ມາດຖານຂອງສາກົນ ແລະ ມີຜົນສໍາເລັດໃນແຕ່ລະໄລຍະ

*# ຂ່າວ-ພາບ: ສໍານັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ)*

***ຢູ່ເມືອງລາວ ໃຊ້ເງິນກີບລາວ***